ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------------

ນາຍົກລັດຖະມົນຕີ ເລກທີ 32 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 06.03.2012.

# ຂໍ້ຕົກລົງ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ 25-26 ມັງກອນ 2012

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມມະຕິຕົກລົງ ຂອງກອງປະຊຸມລັດຖະບານເປີດກວ້າງ ຄັ້ງວັນທີ 26-27 ທັນວາ 2011;
- ອີງຕາມເອກະສານລາຍງານ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 012/ກປ, ລົງວັນທີ 02 ກຸມພາ 2012.

**ນາຍົກລັດຖະມົນຕີ ຕົກລົງ:**

**ມາດຕາ 1:** ຮັບຮອງເອົາຍັດຕິກອງປະຊຸມການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ທີ່ນະຄອນຫຼວງວຽງຈັນ ຄັ້ງວັນທີ 25-26 ມັງກອນ 2012, ເປັນຕົ້ນແມ່ນທິດທາງ ແລະ ມາດຕະການ ເພື່ອປັບປຸງວຽກງານຄຸ້ມຄອງ, ກວດກາປ່າໄມ້ ແລະ ທຸລະກິດໄມ້ໃຫ້ມີປະສິດຜົນ ແນໃສ່ບັນລຸຄາດໝາຍຍຸດທະສາດການປົກຫຸ້ມປ່າໄມ້ ທີ່ໄດ້ວາງອອກ, ຊຶ່ງລະອຽດມີດັ່ງນີ້:

1. ຄວາມຮັບຮູ້ ແລະ ທັດສະນະລວມ:

1.1 ຊັບພະຍາກອນປ່າໄມ້ ມີບົດບາດສຳຄັນ ຕໍ່ການພັດທະນາເສດຖະກິດສັງຄົມຂອງຊາດ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ໃນປະຈຸບັນ ແລະ ຕໍ່ໜ້າ; ການຄຸ້ມຄອງວຽກງານປ່າໄມ້ໃນໄລຍະຜ່ານມາ ຍັງມີຄວາມສັບສົນ, ບໍ່ມີການປະສານກົມກຽວກັນດີ ລະຫວ່າງຂະແໜງການຂັ້ນສູນກາງ ແລະ ລະຫວ່າງສູນກາງ ກັບທ້ອງຖິ່ນ; ການຂຸດຄົ້ນໄມ້ໃນເຂດປ່າຜະລິດສ່ວນຫຼວງຫຼາຍ ບໍ່ປະຕິບັດຕາມລະບົບຈັດສັນແບບຍືນຍົງ, ຍັງມີລັກສະນະຊະຊາຍ, ບໍ່ໄປຕາມຫຼັກການວິຊາການ, ບໍ່ຖືກຕາມລະບຽບກົດໝາຍ, ບໍ່

ໄປຕາມທິດທາງນະໂຍບາຍຂອງພັກ ແລະ ລັດຖະບານທີ່ໄດ້ວາງອອກໃນກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII; ຂາດຄວາມເຂັ້ມງວດໃນການປະຕິບັດບັນດານິຕິກໍາທີ່ມີ ຈຶ່ງກາຍເປັນເງື່ອນໄຂໃຫ້ມີການສວຍໂອກາດ ດ້ວຍຮູບການຕ່າງໆນາໆ, ເຮັດໃຫ້ລັດ ກໍຄືປະເທດຊາດ ເສຍຜົນປະໂຫຍດຢ່າງມະຫາສານ.

1.2 ການຄຸ້ມຄອງ, ກວດກາ ແລະ ພັດທະນາປ່າໄມ້ ກໍຄື ການຈັດສັນຄຸ້ມຄອງປ່າໄມ້ຕ້ອງໃຫ້ຖືກຕາມທິດຮັບປະກັນຄວາມຍືນຍົງ ແລະ ນະໂຍບາຍຂອງລັດຖະບານ, ຕ້ອງປົກປັກຮັກສາບ່ອນທີ່ຍັງມີການປົກຫຸ້ມໃນປະຈຸບັນ ບໍ່ວ່າຢູ່ພາຍໃນ ແລະ ນອກພື້ນທີ່ 3 ປະເພດປ່າໄມ້ ບໍ່ໃຫ້ຖືກທໍາລາຍ ຫຼື ຂຸດໂຊມລົງຕື່ມອີກ ແລະ ພ້ອມດຽວກັນກໍຕ້ອງໄດ້ຟື້ນຟູເຂດທີ່ຂຸດໂຊມໃຫ້ຄືນເປັນປ່າ ເພື່ອໃຫ້ບັນລຸໄດ້ຄາດໝາຍຍຸດທະສາດການປົກຫຸ້ມປ່າໄມ້ໃຫ້ໄດ້ 65% ໃນປີ 2015 ແລະ 70% ໃນປີ 2020.

2. ວຽກທີ່ພົວພັນເຖິງນະໂຍບາຍລວມ:

2.1 ກໍານົດເຂດນໍາໃຊ້ທີ່ດິນລວມລະດັບຊາດ, ແຂວງ ແລະ ເມືອງ ໃຫ້ສໍາເລັດໂດຍໄວ ເພື່ອເປັນບ່ອນອີງ ໃນການປັບປຸງລະບຽບການ ໃນການໃຫ້ສໍາປະທານທີ່ດິນໃຫ້ເປັນລະບົບລວມສູນ ແລະ ກໍານົດເຂດປະເພດທີ່ດິນຕ່າງໆໃຫ້ຈະແຈ້ງ ເພື່ອກໍານົດແນວທາງ ແລະ ແຜນການພັດທະນາ ແລະ ນໍາໃຊ້ສະເພາະແຕ່ລະປະເພດ ໃຫ້ສອດຄ່ອງ ແລະ ບໍ່ຂັດແຍ້ງກັນ.

2.2 ບໍ່ອະນຸຍາດໃຫ້ມີການຫັນປ່ຽນທີ່ດິນ ໃນເຂດ 3 ປະເພດປ່າໄມ້ ແລະ ໃນບ່ອນທີ່ມີປ່າໄມ້ຢູ່ນອກເຂດຂອງ 3 ປະເພດປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການ.

2.3 ປັບປຸງລະບົບການຄຸ້ມຄອງປ່າໄມ້ຄືນໃໝ່ ໂດຍແບ່ງເຂດຄຸ້ມຄອງປ່າໄມ້ຂອງເມືອງອອກເປັນເຂດຄຸ້ມຄອງຍ່ອຍ ຕາມກຸ່ມບ້ານພັດທະນາ ແລະ ຈັດຕັ້ງໃຫ້ມີໜ່ວຍຄຸ້ມຄອງສະເພາະ ເພື່ອໃຫ້ມີຜູ້ຮັບຜິດຊອບຈະແຈ້ງ ແລະ ມີການຄຸ້ມຄອງເປັນລະບົບເອື້ອອໍານວຍໃຫ້ປະຊາຊົນເຂົ້າຮ່ວມໄດ້ສະດວກ.

2.4 ຢຸດຕິການຊໍາລະໜີ້ສິນ ດ້ວຍການອະນຸຍາດໂກຕາໄມ້ໃຫ້ແກ່ຜູ້ລົງທຶນໂດຍກົງ; ຕ້ອງຫັນໄປສູ່ການຊໍາລະດ້ວຍງົບປະມານ, ເປັນລະບົບ, ໂປ່ງໃສ, ມີປະສິດທິພາບ ເພື່ອຫຼີກເວັ້ນການສວຍໂອກາດ ແລະ ການສູນເສຍຜົນປະໂຫຍດຂອງຊາດແບບບໍ່ສົມເຫດສົມຜົນ. ໃນກໍລະນີຈໍາເປັນມີການເອົາໄມ້ເພື່ອຊໍາລະໜີ້ສິນ, ຕ້ອງແຕ່ງຕັ້ງຄະນະກໍາມະການເພື່ອຄົ້ນຄວ້າວິທີການຈັດຕັ້ງປະຕິບັດທີ່ເປັນລະບົບ, ມີປະສິດທິພາບ, ມີຄວາມໂປ່ງໃສ, ບໍ່ຄຸມເຄືອແກ່ຍາວ ແລະ ໃຫ້ໄດ້ປະໂຫຍດສູງສຸດແກ່ປະເທດຊາດ; ບໍ່ອະນຸຍາດໃຫ້ເອົາໄມ້ແລກປ່ຽນກັບໂຄງການໃນທຸກກໍລະນີ.

3. ວຽກຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ:

3.1 ຕ້ອງຮີບຮ້ອນອອກນິຕິກຳສ້າງຕັ້ງປ່າປ້ອງກັນແຫ່ງຊາດ ເພື່ອເປັນບ່ອນອີງໃນການຜັນຂະຫຍາຍອອກເປັນລະບຽບການສະເພາະ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຈັດສັນ ຄຸ້ມຄອງປ່າປ້ອງກັນໃນຕໍ່ໜ້າ.

3.2 ຕ້ອງຮີບຮ້ອນປັບປຸງກົງຈັກການຈັດຕັ້ງຄຸ້ມຄອງປ່າປ້ອງກັນ ແລະ ປ່າສະຫງວນໂດຍໄວ ແລະ ໃຫ້ມີປະສິດທິພາບ.

3.3 ສຸມໃສ່ວຽກງານ ແລະ ໝາຍເຂດແດນປ່າສະຫງວນ ແລະ ປ່າປ້ອງກັນໃຫ້ຈະແຈ້ງ ແລະ ກຳນົດແຜນການຈັດສັນຄຸ້ມຄອງ ທີ່ຕິດພັນກັບການພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສໃນເຂດປ່າສະຫງວນ, ປ່າປ້ອງກັນ ໃຫ້ດີຂຶ້ນກວ່າເກົ່າ.

3.4 ສ້າງກົນໄກສະໜັບສະໜູນ ທີ່ເອື້ອອຳນວຍໃຫ້ເກີດມີການຈັດສັນປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ ຕິດພັນກັບການພັດທະນາພະລັງງານໄຟຟ້ານ້ຳຕົກ, ການທ່ອງທ່ຽວທຳມະຊາດ ແລະ ການພັດທະນາດ້ານອື່ນໆ ເພື່ອຊຸກຍູ້ການເຂົ້າຮ່ວມເປັນເຈົ້າການຂອງປະຊາຊົນ ເຊັ່ນ: ກົນໄກການຈ່າຍຄ່າຕອບແທນການປົກປັກຮັກສາຊັບພະຍາກອນປ່າໄມ້; ກົນໄກສິນເຊື່ອກາກບອນ; ກົນໄກການຈ່າຍຄ່າຊົດເຊີຍການທຳລາຍຊັບພະຍາກອນປ່າໄມ້ ຫຼື ຫັນປ່ຽນທີ່ດິນປ່າໄມ້; ການເພີ່ມປະສິດທິພາບການນຳໃຊ້ໄມ້ ແລະ ອື່ນໆ.

3.5 ຢຸດຕິການຂຸດຄົ້ນ, ການຄ້າຂາຍ, ການອະນຸຍາດນຳຜ່ານ ພືດ ແລະ ສັດຊະນິດຫວງຫ້າມ, ຖືກຄຸກຄາມ, ຫາຍາກ ຫຼື ໃກ້ຈະສູນພັນ; ປະຕິບັດຢ່າງຕັ້ງໜ້າພັນທະ ແລະ ສິນທິສັນຍາທີ່ປະຕິບັດຮ່ວມກັບສາກົນ (CITES), ພາກພື້ນ ແລະ ລະຫວ່າງປະເທດ; ຄຸ້ມຄອງບັນດາຊະນິດພັນດັ່ງກ່າວ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍປ່າໄມ້ຢ່າງເຂັ້ມງວດ.

4. ວຽກງານຈັດສັນເຂດປ່າຜະລິດ:

4.1 ຮີບຮ້ອນ ສ້າງແຜນຈັດສັນເຂດຜະລິດປ່າໄມ້ ໃຫ້ສຳເລັດ ໃນປີ 2015 ເພື່ອນຳເອົາປ່າໄມ້ ເຂົ້າສູ່ລະບົບການຈັດສັນແບບຍືນຍົງ.

4.2 ຂະຫຍາຍການຈັດສັນປ່າໄມ້ບ້ານ ຕິດພັນການຈັດສັນ 3 ປະເພດປ່າ; ສົ່ງເສີມການປູກໄມ້ ປະສົມປະສານກັບພືດກະສິກຳ ຫຼື ເຄື່ອງປ່າຂອງດົງທີ່ເປັນເສດຖະກິດ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ/ຫຼື ຜະລິດສະບຽງ ແລ້ວແຕ່ເງື່ອນໄຂເໝາະສົມ.

4.3 ເສີມຂະຫຍາຍການຢັ້ງຢືນປ່າໄມ້, ການຢັ້ງຢືນໄມ້ ແລະ ການຢັ້ງຢືນແຫຼ່ງທີ່ມາຂອງຜະລິດຕະພັນໄມ້ (ລະບົບຄຸ້ມຄອງແບບຕ່ອງໂສ້), ລວມທັງການປັບປຸງການປຸງແຕ່ງ ແລະ ການທຸລະກິດປ່າໄມ້.

5. ການຂຸດຄົ້ນໄມ້ ແລະ ການຄຸ້ມຄອງການຂຸດຄົ້ນໄມ້:

5.1 ລັດຖະບານອະນຸມັດແຜນຂຸດຄົ້ນໄມ້ປະຈຳສົກປີ ສະເພາະແຕ່ໃນເຂດປ່າຜະລິດທີ່ມີແຜນຈັດສັນ ແລະ ເຂດທີ່ມີຄວາມຈຳເປັນທີ່ຈະຕ້ອງຂຸດຄົ້ນໄມ້ອອກ,ເຊັ່ນ: ເຂດກໍ່ສ້າງເຂື່ອນໄຟຟ້າ, ເຂດຂຸດຄົ້ນບໍ່ແຮ່, ແລວສາຍໄຟ, ແລວທາງ, ເຂດບຸກເບີກເນື້ອທີ່ປູກໄມ້ ແລະ

ພືດອຸດສາຫະກຳບ່ອນທີ່ລັດຖະບານໄດ້ອະນຸມັດເທົ່ານັ້ນ; ອັນພິເສດແມ່ນຕ້ອງອະນຸມັດໃຫ້ປ່າໄມ້ຊາວບ້ານໃນເຂດໂຄງການນ້ຳເທີນ 2 ຂຸດຄົ້ນໄມ້ ແຕ່ລະປີ 6.000 ແມັດກ້ອນຢູ່ໃນເຂດປ່າໄມ້ຊຸມຊົນ ຕາມພັນທະທີ່ລັດຖະບານມີຕໍ່ສາກົນ ເພື່ອເອົາລາຍຮັບນີ້ປະກອບສ່ວນເຂົ້າໃນການເພີ່ມລາຍຮັບໃຫ້ແກ່ປະຊາຊົນໃນເຂດທີ່ຖືກຍົກຍ້າຍຈັດສັນ. ການອະນຸມັດແຜນສະເໜີຂຸດຄົ້ນປະຈຳປີ ຄວນໃຫ້ທັນໃນເດືອນກໍລະກົດຂອງແຕ່ລະປີ ແລະ ເດັດຂາດບໍ່ໃຫ້ມີການອອກອະນຸຍາດເພີ່ມ ຈາກແຜນທີ່ໄດ້ອະນຸມັດປະຈຳປີແລ້ວ. ສຳລັບສົກປີ 2011-2012, ລັດຖະບານຄວນອະນຸມັດການຂຸດຄົ້ນໄມ້ ສະເພາະແຕ່ໃນເຂດໂຄງການກໍ່ສ້າງພື້ນຖານໂຄງລ່າງ, ເຂດບຸກເບີກເນື້ອທີ່ປູກໄມ້ ແລະ ພືດອຸດສາຫະກຳທີ່ລັດໄດ້ອະນຸມັດແລ້ວ ໂດຍມີການຄຸ້ມຄອງຄັກແນ່; ສ່ວນເຂດປ່າຜະລິດທີ່ຈັດໄດ້ສັນ ແລະ ສຳເລັດການສຳຫຼວດໝາຍຕົ້ນຕັດແລ້ວ ກໍ່ອະນຸມັດໃຫ້ຂຸດຄົ້ນ ໂດຍມອບໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສັງລວມນຳສະເໜີໃຫ້ລັດຖະບານຕົກລົງ.

5.2 ການຂຸດຄົ້ນໄມ້ໃນເຂດປ່າຜະລິດ, ໃຫ້ກອງຂຸດຄົ້ນໄມ້ ຫຼື ວິສາຫະກິດຂຸດຄົ້ນໄມ້ຂອງແຂວງ ເປັນຜູ້ດຳເນີນ ແລະ ໃຫ້ປະຊາຊົນເຂົ້າຮ່ວມໃນບ່ອນທີ່ມີເງື່ອນໄຂ. ສຳລັບການຂຸດຄົ້ນໄມ້ ໃນເຂດບຸກເບີກກໍ່ສ້າງພື້ນຖານໂຄງລ່າງ, ເຂດຂຸດຄົ້ນບໍ່ແຮ່ ແລະ ເຂດບຸກເບີກປູກໄມ້ ຫຼື ພືດອຸດສາຫະກຳ ທີ່ລັດຖະບານອະນຸມັດ ແມ່ນໃຫ້ຈັດຕັ້ງການປະມູນການຂຸດຄົ້ນ ເພື່ອໃຫ້ບໍລິສັດທີ່ມີເງື່ອນໄຂທີ່ຈະສາມາດຕອບສະໜອງ ແລະ ຮັບປະກັນໄດ້ຕາມຄວາມຕ້ອງການດ້ານມາດຖານເຕັກນິກ ເຂົ້າໄປຂຸດຄົ້ນໄມ້.

5.3 ການຂຸດຄົ້ນໄມ້ ໃນເຂດໂຄງການກໍ່ສ້າງເຂື່ອນໄຟຟ້າ ຕ້ອງປະຕິບັດຕາມລະບຽບການວ່າດ້ວຍການຂຸດຄົ້ນໄມ້ ແລະ ອະນາໄມຫຼັງການຂຸດຄົ້ນ ໃນຂອບເຂດອ່າງເກັບນ້ຳເຂື່ອນໄຟຟ້ານ້ຳຕົກ ສະບັບເລກທີ 0112/ກປ, ລົງວັນທີ 25/11/2008 ຢ່າງເຂັ້ມງວດ.

5.4 ການຄົ້ນຄວ້າ ແລະ ພິຈາລະນາ ອະນຸມັດໂຄງການທີ່ພົວພັນເຖິງການນຳໃຊ້ ຫຼື ຫັນປ່ຽນທີ່ດິນປ່າໄມ້ ຕ້ອງໄດ້ຜ່ານການປະກອບຄຳເຫັນ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

5.5 ການຂຸດຄົ້ນເຄື່ອງປ່າຂອງດົງ ແລະ ພືດເປັນຢາ ເພື່ອທຸລະກິດ ຕ້ອງດຳເນີນຕາມແຜນຈັດສັນຢ່າງມີລະບົບ ແລະ ບົນພື້ນຖານຜົນການສຳຫຼວດຕົວຈິງ.

5.6 ການຂຸດຄົ້ນໄມ້ຫວງຫ້າມ ໃຫ້ປະຕິບັດຕາມ ມາດຕາ 101 ຂໍ້ທີ 8 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007, ຍົກເວັ້ນແຕ່ໄດ້ຮັບອະນຸຍາດຈາກລັດຖະບານ.

5.7 ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການຮັບຜິດຊອບໃນການຄຸ້ມຄອງ, ກວດກາ ແລະ ຕິດຕາມການຂຸດຄົ້ນ ແລະ ເຄື່ອນຍ້າຍໄມ້ທ່ອນ, ຕົ້ນໄມ້ທຳມະຊາດເພື່ອເປັນໄມ້ປະດັບ, ເຄື່ອງປ່າຂອງດົງ, ພືດເປັນຢາ ລວມທັງ ການເຄື່ອນຍ້າຍໄມ້ເລື່ອຍ ຫລື ແປຮູບທຸກຊະນິດ ແລະ ຜະລິດຕະພັນໄມ້ທຸກຊະນິດ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້.

5.8 ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງແຮງງານຕ່າງດ້າວ, ພາຫານະ ແລະ ກົນຈັກຂຸດຄົ້ນ, ລາກແກ່, ຂົນສົ່ງໄມ້ (ລົດແຊແລວ) ຄື: ຕ້ອງໄດ້ມີລະບຽບ ແລະ ມາດຕະການ ທີ່ຮັດກຸມໃນການຄຸ້ມຄອງ.

6. ການຄຸ້ມຄອງທຸລະກິດໄມ້:

6.1 ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຂາຍໄມ້ທ່ອນທີ່ຂຸດຄົ້ນຈາກທຸກໆແຫຼ່ງ ດ້ວຍຮູບການປະມູນເປີດກວ້າງ ຫຼື ທາບທາມລາຄາ ໃນລະດັບຊາດ ໂດຍເປີດກວ້າງໃຫ້ທຸກໆໂຮງງານປຸງແຕ່ງໄມ້ ຢູ່ພາຍໃນ ແລະ ຕ່າງປະເທດ ມີສິດເຂົ້າຮ່ວມ.

6.2 ດັດສົມຈຳນວນໂຮງງານປຸງແຕ່ງໄມ້ ໃຫ້ສົມດູ່ກັບຄວາມສາມາດສະໜອງໄມ້ຈາກປ່າຜະລິດ; ໂຮງງານປຸງແຕ່ງໄມ້ຕ້ອງປະຕິບັດໄດ້ມາດຖານ ທີ່ກຳນົດໄວ້ໃນຂໍ້ຕົກລົງ ສະບັບເລກທີ 0719/ອຄ, ຕ້ອງຫັນເຂົ້າສູ່ລະບົບການຜະລິດແບບອຸດສາຫະກຳ, ມີຄວາມທັນສະໄໝ ດ້ວຍການຍົກສູງຜະລິດຕະພາບ ແລະ ປັດໄຈການຜະລິດ; ແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ກ່ຽວກັບການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງໄມ້ ແລະ ຖືເອົາຄວາມສາມາດຕອບສະໜອງຂອງປ່າ ເປັນພື້ນຖານໃນການອອກອະນຸຍາດຂຸດຄົ້ນ ແລະ ການຂະຫຍາຍໂຮງງານ ແລະ ທຸລະກິດກ່ຽວຂ້ອງອື່ນໆ.

6.3 ຢຸດຕິການອອກອະນຸຍາດໃຫ້ເກັບຊື້ໄມ້; ເຂັ້ມງວດຕໍ່ການເກັບຊື້ແບບຊະຊາຍ ແລະ ບັງຄັບໃຫ້ການຊື້ຂາຍໄມ້ ຕ້ອງປະຕິບັດການຊຳລະຜ່ານທະນາຄານ.

6.4 ໃຫ້ກວດຄືນການອອກທະບຽນວິສາຫະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ການອອກອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້ ເພື່ອປັບປຸງໃຫ້ມີລັກສະນະສະເພາະກິດຈະກຳປ່າໄມ້.

7. ການປະຕິບັດນະໂຍບາຍດ້ວຍໄມ້:

7.1 ໃຫ້ກຳນົດລະບົບໃຫ້ຈະແຈ້ງ ກ່ຽວກັບການອະນຸມັດໄມ້ນະໂຍບາຍ ແລະ ໄມ້ສົມທົບການພັດທະນາປະເພດຕ່າງໆ ແລະ ໃຫ້ອີງໃສ່ ມາດຕາ 40 ແລະ 41 ຂອງກົດໝາຍ ວ່າດ້ວຍປ່າໄມ້. ສຳລັບໂຄງການຂອງກະຊວງສຶກສາທິການ ແລະ ກິລາ ທີ່ເອົາໄມ້ສົມທົບການກໍ່ສ້າງໂຮງຮຽນ ໃຫ້ປະຕິບັດຕາມມາດຕາ 40 ຂອງກົດໝາຍວ່າດ້ວຍປ່າໄມ້ ແລະ ພ້ອມດຽວກັນນັ້ນ ກໍໃຫ້ມີແບບ ແລະ ລາຍການວັດສະດຸ ຊຶ່ງສະຖາບັນອອກແບບກໍ່ສ້າງເປັນຜູ້ຢັ້ງຢືນຕິດຄັດກັບເອກະສານສະເໜີຂໍຕັດໄມ້ ເຖິງຂະແໜງການກ່ຽວຂ້ອງ.

7.2 ຢຸດຕິການອະນຸມັດໄມ້ນະໂຍບາຍ ໃຫ້ຄອບຄົວຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ພະນັກງານບຳນານ ແລະ ອື່ນໆ.

8. ວຽກງານກວດກາປ່າໄມ້:

8.1 ລົບລ້າງຄະນະສະເພາະກິດ ທີ່ອົງການປົກຄອງທ້ອງຖິ່ນຕັ້ງຂຶ້ນເພື່ອກວດກາໄມ້ ໃຫ້ໝົດ ເພື່ອໃຫ້ຂະແໜງການກ່ຽວຂ້ອງປະຕິບັດພາລະບົດບາດຂອງຕົນໄດ້ເຕັມສ່ວນ.

8.2 ໃນການປັບປຸງວຽກງານກວດກາປ່າໄມ້ ໃຫ້ສາມາດເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດຢ່າງລວມສູນເປັນເອກະພາບ ຕາມຂະແໜງການສາຍຕັ້ງນັ້ນ, ໃນຂັ້ນຕົ້ນ ໃຫ້ຖອດຖອນບົດຮຽນນຳຂະແໜງການພາສີສາກ່ອນ.

8.3 ປັບປຸງລະບົບການກວດກາປ່າໄມ້ ຢູ່ຕາມຈຸດຫຼໍ່ແຫຼມລຽບຕາມຊາຍແດນ ແລະ ຈຸດຕ່າງໆທີ່ເຫັນວ່າມີຄວາມຈຳເປັນ. ໃນໄລຍະຍາວ, ຕ້ອງປັບປຸງວຽກງານກວດກາໃຫ້ກວມເອົາທຸກຂອດວຽກ ນັບແຕ່ການກວດກາການປະຕິບັດຂໍ້ບັງຄັບ ແລະ ເງື່ອນໄຂຕ່າງໆໃນການຈັດສັນປ່າ, ການກວດກາການຂຸດຄົ້ນ, ການຄຸ້ມຄອງ-ຕິດຕາມການເຄື່ອນຍ້າຍຜະລິດຕະພັນປ່າໄມ້, ການກວດກາເພື່ອການຍັ້ງຢືນປ່າໄມ້ ແລະ ອື່ນໆ.

8.4 ການຄຸ້ມຄອງປ່າໄມ້ຕາມແລວຊາຍແດນ, ຄວນສືບຕໍ່ການເຈລະຈາໃນລະດັບຊາດ, ແຂວງ ແລະ ເມືອງ ໂດຍໃຫ້ປະຕິບັດຕາມສົນທິສັນຍາສາກົນ ວ່າດ້ວຍການປົກປັກຮັກສາຊາຍແດນ. ພ້ອມນີ້, ກໍຄວນນຳເອົາການພັດທະນາທີ່ຈຳເປັນເຂົ້າໄປ ເຊັ່ນ: ການສ້າງເສັ້ນທາງ.

9. ວຽກສົ່ງເສີມການປຸງແຕ່ງ, ການຄຸ້ມຄອງທຸລະກິດ ແລະ ການຄ້າ:

9.1 ອຳນາດການປົກຄອງທ້ອງຖິ່ນບໍ່ຄວນອອກລະບຽບການເກັບເງິນເພີ່ມຈາກການຂາຍໄມ້, ການເຄື່ອນຍ້າຍໄມ້ ແລະ ສົ່ງອອກໄມ້ ທີ່ບໍ່ນອນຢູ່ໃນລະບຽບກົດໝາຍ ແລະ ຄ່າທຳນຽມຂອງລັດວາງອອກ;

9.2 ເພີ່ມທະວີການພັດທະນາ ແລະ ການຄຸ້ມຄອງການຜະລິດ ແລະ ການນຳໃຊ້ໄມ້ເພື່ອພະລັງງານ ເຊັ່ນ: ໄມ້ຟືນ, ຖ່ານ ແລະ ອື່ນໆ ໃຫ້ມີລະບົບການຄຸ້ມຄອງຕິດຕາມກວດກາຄັກແນ່; ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ອຸດສາຫະກຳ ແລະ ການຄ້າ ສົມທົບກັນເພື່ອກຳນົດລະບຽບການສະເພາະທີ່ຈຳເປັນ.

10. ວຽກງານປັບປຸງ ແລະ ຈັດຕັ້ງປະຕິບັດນິຕິກຳ:

10.1 ໃຫ້ທຸກພາກສ່ວນເຂົ້າຮ່ວມກວດເບິ່ງຄືນ ແລະ ປັບປຸງກົດໝາຍວ່າດ້ວຍປ່າໄມ້ ແລະ ນິຕິກຳອື່ນໆໃຫ້ມີຄວາມຮັດກຸມ, ບໍ່ມີຊ່ອງຫວ່າງ, ຮັບປະກັນຄວາມກົມກຽວຂອງວຽກງານໃນຂົງເຂດຕ່າງໆ ໂດຍຖືເອົາກົດໝາຍປ່າໄມ້ເປັນພື້ນຖານ; ໃນສະເພາະໜ້າ ໃຫ້ຄົ້ນຄວ້າປັບປຸງ ຄຳສັ່ງເລກທີ 17/ນຍ (22/9/2008) ແລະ ລົບລ້າງຄຳສັ່ງເພີ່ມເຕີມ ເລກທີ 09/ນຍ (2/5/2008) ວ່າດ້ວຍການແກ້ໄຂບັນຫາໄມ້ຍຶດ, ໄມ້ຮິບໂຮມ ແລະ ໄມ້ເນື້ອອ່ອນທີ່ຄ້າງຄາ ແລະ ຂໍ້ຕົກລົງເລກທີ 23/ນຍ (24/2/2009).

10.2 ເພີ່ມຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດການນຳໃຊ້ນິຕິກຳຕ່າງໆ ແລະ ຫັນໄປສູ່ການຄຸ້ມຄອງດ້ວຍກົດໝາຍຢ່າງໜັກແໜ້ນ.

10.3 ຮີບຮ້ອນອອກນິຕິກຳເພີ່ມເຕີມ ກ່ຽວກັບການຂຸດຄົ້ນໄມ້ໃນເຂດຂຸດຄົ້ນບໍ່ແຮ່, ເຂດກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ, ແລວທາງ, ແລວສາຍໄຟ, ເຂດບຸກເບີກເພື່ອປູກໄມ້, ພືດອຸດສາຫະກຳ ແລະ ເຂດນອກປ່າຜະລິດ.

11. ການແບ່ງຄວາມຮັບຜິດຊອບຄຸ້ມຄອງ ລະຫວ່າງຂະແໜງການ:

11.1 ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບໂດຍກົງທຸກຂົງເຂດວຽກງານທີ່ພົວພັນກັບເຂດປ່າສະຫງວນ ແລະ ປ່າປ້ອງກັນ.

11.2 ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໂດຍກົງ ທຸກຂົງເຂດວຽກງານທີ່ພົວພັນກັບເຂດປ່າຜະລິດ ແລະ ທີ່ດິນປ່າໄມ້ ນອກເຂດພື້ນທີ່ 3 ປະເພດປ່າ ແລະ ປ່າປູກ. ນອກຈາກນີ້, ຍັງຮັບຜິດໂດຍກົງວຽກງານກວດກາປ່າໄມ້, ວຽກຍັ້ງຢືນປ່າໄມ້.

11.3 ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ການກຳນົດລາຄາຂາຍ ແລະ ການຊື້-ຂາຍຜະລິດຜົນປ່າໄມ້.

ມາດຕາ 2: ໃຫ້ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ປະສານສົມທົບກັນ ຈັດຕັ້ງປະຕິບັດຍັດຕິກອງປະຊຸມດັ່ງກ່າວ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງ, ບັນດາແຂວງໃນທົ່ວປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ